Seattle Office of Labor Standards

# Domestic Workers Ordinance

## ແຈ້ງການກ່ຽວກັບສິດ ແລະ ຂໍ້ມູນການຈ່າຍເງິນ ສະບັບ

ຜູ້ທີ່ຈ້າງງານຫຼືຈ່າຍຄ່າບໍລິການຂອງແຮງງານພາຍໃນທີ່ຄຸ້ມຄອງໂດຍຄໍາສັ່ງແຮງງານພາຍໃນ(Domestic Workers Ordinance)ແມ່ນໄດ້ຮັບການຊຸກຍູ້ໃຫ້ແຈກຢາຍໜັງສືແຈ້ງການສະບັບນີ້ໃຫ້ກັບຄົນງານຂອງພວກເຂົາ,ເປັນພາສາທີ່ຄົນງານສະດວກສະບາຍໃຊ້ທີ່ສຸດ.ແຈ້ງການສະບັບນີ້ບໍ່ມີຈຸດປະສົງເປັນຄໍາແນະນໍາທາງດ້ານກົດໝາຍ ແລະ ບໍ່ໄດ້ສ້າງສັນຍາກັບເມືອງ Seattle.

ວັນທີແຈ້ງການ ____/____/________ ຊື່ຄົນງານ ________________________________

ຊື່ໜ່ວຍງານການຈ້າງງານ ________________________ ໂທລະສັບ ຫຼື ອີເມວຂອງໜ່ວຍງານການຈ້າງງານ ________________

ທີ່ຢູ່ຂອງໜ່ວຍງານການຈ້າງງານ ________________________________________

## ສິດທິໄດ້ຮັບຄ່າຕອບແທນຂັ້ນຕໍ່າ

ທ່ານມີສິດໄດ້ຮັບຢ່າງໜ້ອຍຕ້ອງແມ່ນຄ່າຈ້າງຂັ້ນຕໍ່າຂອງ Seattle. ອັດຕາຄ່າຈ້າງລາຍຊົ່ວໂມງຂອງທ່ານແມ່ນ: $__________ / ຊົ່ວໂມງ.

ທ່ານຈະໄດ້ຮັບການຈ່າຍເງິນໃນ: ________________________
(ເຊັ່ນ: ໃນຕອນທ້າຍຂອງແຕ່ລະມື້ເຮັດວຽກ, ທຸກໆວັນສຸກ, ທຸກໆ 2 ອາທິດໃນວັນອັງຄານ, ແລະ ອື່ນໆ)

### ການມີສິດເຮັດລ່ວງເວລາ: ໝາຍຕິກໃສ່ກ່ອງທີ່ໃຊ້ໄດ້

☐ ທ່ານບໍ່ມີສິດເຮັດວຽກລ່ວງເວລາ.

■ ທ່ານເປັນພະນັກງານ "ມີສິດເຮັດວຽກລ່ວງເວລາ", ເຊິ່ງໝາຍຄວາມວ່າທ່ານໄດ້ຮັບການຈ່າຍ 1.5 ເທົ່າ ຂອງອັດຕາຄ່າຈ້າງປົກກະຕິສໍາລັບຊົ່ວໂມງເຮັດວຽກທີ່ເກີນ 40 ຊົ່ວໂມງ ໃນອາທິດເຮັດວຽກ.

### ຄ່າຈ້າງຂັ້ນຕໍ່າເປັນລາຍຊົ່ວໂມງ

ເພື່ອຊອກຫາອັດຕາຂັ້ນຕໍ່າປະຈຸບັນຂອງ Seattle ແລະ ຮຽນຮູ້ເພີ່ມເຕີມ, ເຂົ້າເບິ່ງ: seattle.gov/domestic-workers ຫຼື ສະແກນລະຫັດ QR ນີ້

** ຖ້າທ່ານເປັນພະນັກງານ, ນາຍຈ້າງຂອງທ່ານຕ້ອງໃຫ້ຂໍ້ມູນກ່ຽວກັບນະໂຍບາຍການໃຫ້ເງິນທີບແກ່ໃຫ້ທ່ານ.

ໝາຍຕິກໃສ່ກ່ອງ ຖ້າຫາກມີເອກະສານຕິດຄັດ ☐

## ສິດທິໄດ້ຮັບເວລາພັກຜ່ອນ

ສໍາລັບທຸກໆສີ່ຊົ່ວໂມງທີ່ທ່ານເຮັດວຽກໃຫ້ໜ່ວຍງານຈ້າງງານໜຶ່ງແຫ່ງ,ທ່ານມີສິດໄດ້ຮັບການພັກຜ່ອນທີ່ບໍ່ມີການຂັດຂວາງ 10 ນາທີ ທີ່ໄດ້ຮັບຄ່າຈ້າງໃນຕອນທ້າຍຂອງຊົ່ວໂມງເຮັດວຽກທີສາມ.

### ເວລາພັກຜ່ອນ: ໝາຍຕິກໃສ່ກ່ອງທີ່ໃຊ້ໄດ້

ທ່ານຈະສາມາດໃຊ້ເວລາພັກຜ່ອນທີ່ບໍ່ມີການຂັດຂວາງທີ່ໄດ້ຮັບຄ່າຈ້າງ.

ທ່ານຈະສາມາດໃຊ້ເວລາພັກຜ່ອນໃນຂະນະທີ່ຍັງຢູ່ໃນບ່ອນເຮັດວຽກ ແລະ ຕ້ອງກັບຄືນໄປເຮັດວຽກເມື່ອຖືກເອີ້ນ. ຖ້າທ່ານມີຄວາມຮັບຜິດຊອບຕໍ່ສຸຂະພາບ ແລະ ຄວາມປອດໄພຂອງບາງຄົນພາຍໃຕ້ການດູແລຂອງທ່ານ, ທ່ານອາດຈະພາດການພັກຜ່ອນຂອງທ່ານ ຍ້ອນໜ້າທີ່ຂອງທ່ານ. ໃນໂອກາດເຫຼົ່ານັ້ນ, ທ່ານຈະໄດ້ຮັບຄ່າຈ້າງເພີ່ມ 10 ນາທີ, ຫຼື $__________, ສໍາລັບທຸກໆເວລາພັກຜ່ອນທີ່ພາດໄປ.

ໜ້າທີ່ຂອງທ່ານເຮັດໃຫ້ເປັນໄປບໍ່ໄດ້ ຫຼື ເປັນໄປບໍ່ໄດ້ທີ່ຈະໃຊ້ເວລາພັກຜ່ອນແບບບໍ່ມີການຂັດຂວາງ ໂດຍທີ່ບໍ່ເປັນອັນຕະລາຍຕໍ່ສຸຂະພາບ ແລະ ຄວາມປອດໄພຂອງຜູ້ທີ່ຢູ່ພາຍໃຕ້ການດູແລຂອງທ່ານ. ທ່ານຈະໄດ້ຮັບຄ່າຈ້າງເພີ່ມ 10 ນາທີ, ຫຼື $__________, ສໍາລັບທຸກໆສີ່ຊົ່ວໂມງທີ່ເຮັດວຽກ.

### ຂໍ້ກໍານົດເວລາພັກຜ່ອນ:

- ເວລາພັກຜ່ອນນີ້ຕ້ອງອະນຸຍາດໃຫ້ທ່ານພັກຜ່ອນ ແລະ ເຮັດການເລືອກສ່ວນຕົວອື່ນໆວ່າ ທ່ານຈະໃຊ້ເວລາຂອງທ່ານແນວໃດ.
- ທ່ານອາດຈະຖືກຂໍໃຫ້ຢູ່ໃນບ່ອນເຮັດວຽກ ແລະ ກັບຄືນໄປເຮັດວຽກເມື່ອຖືກເອີ້ນ, ແຕ່ຖ້າບໍ່ດັ່ງນັ້ນກໍຖືກປົດອອກຈາກໜ້າທີ່ວຽກງານ.
- ຖ້າເວລາພັກຜ່ອນຂອງທ່ານຖືກຂັດຂວາງໂດຍນາຍຈ້າງຫຼືວຽກງານຂອງທ່ານ,ເວລາພັກຜ່ອນຈະເລີ່ມໃໝ່ຈົນກວ່າທ່ານຈະສາມາດໄດ້ຮັບເວລາພັກຜ່ອນ 10 ນາທີ ຕິດຕໍ່ກັນ.

*ໝາຍເຫດ: ຄົນງານທີ່ໄດ້ຮັບການຈ້າງງານໂດຍກົງໂດຍໜ່ວຍງານຈ້າງງານອາດຈະໄດ້ຮັບມາດຕະຖານແຮງງານທ້ອງຖິ່ນ ແລະ ລັດເພີ່ມເຕີມ, ລວມທັງລາພັກເຈັບປ່ວຍ ແລະ ເວລາຄວາມປອດໄພທີ່ໄດ້ຮັບຄ່າຈ້າງ.
ຂໍ້ມູນເພີ່ມເຕີມກ່ຽວກັບສິດທິຂອງພະນັກງານມີຢູ່ທີ່ www.seattle.gov/laborstandards.

# ສິດທິໄດ້ຮັບຊ່ວງເວລາກິນອາຫານ

ສຳລັບທຸກໆຫ້າຊົ່ວໂມງທີ່ທ່ານເຮັດວຽກໃຫ້ໜ່ວຍງານການຈ້າງງານໜຶ່ງແຫ່ງ, ທ່ານມີສິດໄດ້ຮັບຊ່ວງເວລາກິນອາຫານ 30 ນາທີ ທີ່ບໍ່ມີການຂັດຂວາງໃນຕອນທ້າຍຂອງຊົ່ວໂມງທີຫ້າ.

## ຊ່ວງເວລາກິນອາຫານ: ໝາຍຕິກໃສ່ກ່ອງທີ່ໃຊ້ໄດ້

ໃນຊ່ວງເວລາກິນອາຫານ,ທ່ານຈະໄດ້ຮັບການປົດໜ້າທີ່ວຽກງານ.ທ່ານຈະໄດ້ຮັບຊ່ວງເວລາກິນອາຫານທີ່ບໍ່ໄດ້ຮັບຄ່າຈ້າງ.ທ່ານອາດຈະສາມາດສະລະສິດຊ່ວງເວລາກິນອາຫານທີ່ບໍ່ໄດ້ຮັບຄ່າຈ້າງ.ເບິ່ງກ່ອງດ້ານຂ້າງສຳລັບຂໍ້ກຳນົດການສະລະສິດ.

ໃນຊ່ວງເວລາກິນອາຫານຂອງທ່ານ, ທ່ານຈຳເປັນຕ້ອງຢູ່ໃນບ່ອນເຮັດວຽກ ແລະ ກັບຄືນໄປເຮັດວຽກເມື່ອຖືກເອີ້ນ,ແຕ່ຖ້າບໍ່ດັ່ງນັ້ນກໍຖືກປົດອອກຈາກໜ້າທີ່ວຽກງານ.ທ່ານຈະໄດ້ຮັບຊ່ວງເວລາກິນອາຫານທີ່ໄດ້ຮັບຄ່າຈ້າງ. ທ່ານບໍ່ສາມາດສະລະສິດຊ່ວງເວລາກິນອາຫານທີ່ໄດ້ຮັບຄ່າຈ້າງນີ້.

ທ່ານມີຄວາມຮັບຜິດຊອບຕໍ່ສຸຂະພາບ ແລະ ຄວາມປອດໄພຂອງສະມາຊິກໃນຄົວເຮືອນ, ແຕ່ຄວນຈະສາມາດໄດ້ຮັບຊ່ວງເວລາກິນອາຫານທີ່ໄດ້ຮັບຄ່າຈ້າງ. ໃນມື້ທີ່ທ່ານພາດໄລຍະເວລາກິນອາຫານຂອງທ່ານ ຍ້ອນໜ້າທີ່ວຽກງານຂອງທ່ານ, ທ່ານຕ້ອງໄດ້ຮັບຄ່າຕອບແທນເພີ່ມ 30 ນາທີ, ຫຼື $__________, ສຳລັບທຸກໆຊ່ວງເວລາກິນອາຫານທີ່ພາດ.

ໜ້າທີ່ຂອງທ່ານເຮັດໃຫ້ເປັນໄປບໍ່ໄດ້ ຫຼື ເປັນໄປບໍ່ໄດ້ທີ່ຈະໃຊ້ຊ່ວງເວລາກິນອາຫານແບບບໍ່ມີການຂັດຂວາງ ໂດຍທີ່ບໍ່ເປັນອັນຕະລາຍຕໍ່ສຸຂະພາບ ແລະ ຄວາມປອດໄພຂອງຜູ້ທີ່ຢູ່ພາຍໃຕ້ການດູແລຂອງທ່ານ. ທ່ານຈະໄດ້ຮັບຄ່າຈ້າງເພີ່ມ 30 ນາທີ, ຫຼື $__________, ສຳລັບທຸກໆຫ້າຊົ່ວໂມງທີ່ເຮັດວຽກ.

### ຂໍ້ກຳນົດຊ່ວງເວລາກິນອາຫານ:

- ຊ່ວງເວລາກິນອາຫານນີ້ຕ້ອງອະນຸຍາດໃຫ້ທ່ານພັກຜ່ອນ ແລະ ເຮັດການເລືອກສ່ວນຕົວອື່ນໆວ່າທ່ານຈະໃຊ້ເວລາຂອງທ່ານແນວໃດ.
- ຖ້າຊ່ວງເວລາກິນອາຫານຂອງທ່ານຖືກຂັດຂວາງ ໂດຍນາຍຈ້າງ ຫຼື ວຽກງານຂອງທ່ານ, ຊ່ວງເວລາກິນອາຫານຈະເລີ່ມໃໝ່ຈົນກວ່າທ່ານຈະສາມາດໄດ້ຮັບຊ່ວງເວລາກິນອາຫານ 30 ນາທີ ຕິດຕໍ່ກັນ.

### ມີການສະລະສິດຊ່ວງເວລາກິນອາຫານ ຫຼື ວັນພັກບໍ?

- ການສະລະສິດນີ້ຕ້ອງເປັນຄວາມສະໝັກໃຈ ແລະ ເພື່ອຜົນປະໂຫຍດຂອງຄົນງານ.
- ທ່ານຕ້ອງໄດ້ຮັບການແຈ້ງໃຫ້ຊາບກ່ຽວກັບສິດທິທີ່ທ່ານກຳລັງສະລະສິດແລະຜົນສະທ້ອນຂອງການສະລະສິດ.
- ການສະລະສິດຂອງທ່ານຄວນລະບຸວັນທີທີ່ມີຜົນບັງຄັບໃຊ້ຂອງການສະລະສິດ.
- ທ່ານມີສິດຍົກເລີກການສະລະສິດນີ້ໄດ້ທຸກເວລາ.

# ສິດທິໄດ້ຮັບວັນພັກຜ່ອນ

ຖ້າທ່ານເຮັດວຽກ 6 ມື້ ຕິດຕໍ່ກັນ, ແລະ ອາໄສຢູ່ໃນ ຫຼື ນອນຢູ່ໃນບ່ອນເຮັດວຽກ, ທ່ານມີສິດໄດ້ຮັບຊ່ວງເວລາພັກຜ່ອນ 24 ຊົ່ວໂມງ ທີ່ບໍ່ໄດ້ຮັບຄ່າຈ້າງ.

- ຈຳນວນວຽກໃດໆໃນໄລຍະເວລາ 24 ຊົ່ວໂມງ ເໝາະສົມເປັນວຽກໃນມື້ເຮັດວຽກ.
- ໃນຊ່ວງເວລາພັກຜ່ອນ 24 ຊົ່ວໂມງນີ້, ທ່ານຕ້ອງໄດ້ຮັບການປົດອອກຈາກໜ້າທີ່ວຽກງານ, ບໍ່ຈຳເປັນຕ້ອງຢູ່ບ່ອນເຮັດວຽກ, ຫຼື ຕ້ອງການກັບຄືນໄປເຮັດວຽກຖ້າຖືກເອີ້ນ.
- ທ່ານສາມາດສະລະສິດວັນພັກຜ່ອນໄດ້. ເບິ່ງກ່ອງດ້ານຂ້າງສຳລັບຂໍ້ກຳນົດການສະລະສິດ.

# ສິດທິໃນການເກັບຮັກສາເອກະສານສ່ວນຕົວ

ທ່ານມີສິດທິໃນການເກັບຮັກສາເອກະສານຕົ້ນສະບັບຂອງທ່ານ ແລະ ຂອງໃຊ້ສ່ວນຕົວ.

# ຫ້າມຕອບໂຕ້ຄືນ

ທ່ານມີສິດທີ່ຈະເປັນອິດສະລະຈາກການຕອບໂຕ້ ມັນເປັນການຜິດກົດໝາຍສຳລັບໜ່ວຍງານການຈ້າງງານ ທີ່ຈະດຳເນີນການທີ່ບໍ່ດີ ຫ້າມໃຫ້ນາຍຈ້າງດຳເນີນການທີ່ບໍ່ດີ (ເຊັ່ນ: ການໄລ່ອອກ, ການປົດຕຳແໜ່ງ, ແລະ ການຂົ່ມຂູ່ທີ່ຈະລາຍງານສະຖານະຄົນເຂົ້າເມືອງ) ຕໍ່ທ່ານ ເພື່ອໃຊ້ ສິດທິທີ່ໄດ້ຮັບການປົກປ້ອງໂດຍມາດຕະຖານແຮງງານຂອງ Seattle (Seattle Labor Standards).

## ມີຄຳຖາມ ຫຼື ຄຳຮ້ອງທຸກບໍ?

ເພື່ອຖາມຄຳຖາມ ຫຼື ຄຳຮ້ອງທຸກ, ຕິດຕໍ່ຫາ:
ຫ້ອງການມາດຕະຖານແຮງງານຂອງ **Seattle (Seattle Office of Labor Standards)** ທີ່ **(206) 256-5297**
ຫຼື ເບິ່ງ www.seattle.gov/laborstandards.

ການບໍລິການຂອງພວກເຂົາແມ່ນບໍ່ເສຍຄ່າ.
ພວກເຂົາຈະໃຫ້ບໍລິການແປພາສາໂດຍບໍ່ເສຍຄ່າ.
ພວກເຂົາຈະບໍ່ຖາມທ່ານກ່ຽວກັບສະຖານະຄົນເຂົ້າເມືອງຂອງທ່ານ.

## ການປົກປ້ອງສິດທິພົນລະເຮືອນ

ແຮງງານພາຍໃນຍັງມີສິດທີ່ຈະເປັນອິດສະລະຈາກການຂົ່ມເຫັງທາງເພດ, ການຕອບໂຕ້ ແລະ ການຈຳແນກພາຍໃຕ້ກົດໝາຍວ່າດ້ວຍການຈ້າງງານທີ່ຍຸຕິທຳຂອງ Seattle (Seattle's Fair Employment Practices Law).

ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບສິດທິນີ້, ຕິດຕໍ່ຫາ:
ຫ້ອງການສິດທິພົນລະເຮືອນຂອງ **Seattle (Seattle Office for Civil Rights)** ທີ່ **(206) 684-4500** ຫຼື ເບິ່ງ www.seattle.gov/civilrights.